ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ຜະລິດ-ໄຟຟ້າລາວ EDL-GEN

# “ຜ-ຟຟລ ຮັບລາງວັນ ThaiBMA Award 2018”

ບໍລິສັດ ຜະລິດ-ໄຟຟ້າລາວມະຫາຊົນ(ຜ-ຟຟລ) ໄດ້ຮັບລາງວັນ The Thai Bond Market Association ຫຼື ThaiBMA Award ປະຈໍາປີ 2018, ໃນສາຂາ Distinguished Issuer Award ຫຼື ຜູ້ອອກຮຸ້ນກູ້ທີ່ໂດດເດັ່ນໃນການພັດທະນາຕະຫຼາດຮຸ້ນກູ້ພາກເອກະຊົນ. ThaiBMA ນີ້ແມ່ນສະມາຄົມຕະຫຼາດຮຸ້ນກູ້ແຫ່ງປະເທດໄທ, ຊຶ່ງມີໜ້າທີ່ກ່ຽວກັບການຕິດຕາມສະມາຊິກໃນການເຮັດທຸລະກໍາການຄ້າຮຸ້ນ ແລະ ໄດ້ປັບປຸງໃຫ້ສອດຄ້ອງກັບການພັດທະນາຂອງຕະຫຼາດຮຸ້ນທີ່ນັບມື້ເຕີບໃຫຍ່ຂຶ້ນເລື້ອຍໆ. ພິທີມອບຮັບລາງວັນໄດ້ຈັດຂຶ້ນໃນວັນທີ 21 ກຸມພາ 2019 ທີ່ໂຮງແຮມ The Ascott, ບາງກອກ, ປະເທດໄທ. ລາງວັນ ThaiBMA Award ຈັດຂຶ້ນເພື່ອຮັບຮູ້ແລະສະເຫລີມສະຫລອງຜົນສໍາເລັດຂອງການລະດົມທຶນຂອງບັນດາບໍລິສັດທີ່ພົ້ນເດັ່ນໃນສະມາຄົມ ThaiBMA. ໃນພິທີຮັບລາງວັນອັນຊົງກຽດແລະມີຄວາມຫມາຍສໍາຄັນໃນຄັ້ງນີ້, ຕາງຫນ້າ ຜ-ຟຟລ ແມ່ນນໍາໂດຍ ທ່ານ ນາງ ລັດຕະນາ ປະທຸມວັນ, ຜູ້ອໍານວຍການໃຫຍ່ ຜ-ຟຟລ, ພ້ອມດ້ວຍຕາງຫນ້າຈາກ ທະນາຄານຮ່ວມຈັດຈໍາຫນ່າຍຮຸ້ນກູ້ ແລະ ທີ່ປຶກສາການເງິນແລະກົດຫມາຍ ທີ່ມີສ່ວນຮ່ວມເຮັດໃຫ້ການອອກຮຸ້ນກູ້ຂອງ ຜ-ຟຟລ ໃນປີ 2018 ໄດ້ຮັບຜົນສໍາເລັດຢ່າງຈົບງາມ.
ສາມາດອ່ານລາຍລະອຽດກ່ຽວກັບ ThaiBMA ໄດ້ທີ່: http://www.thaibma.or.th/EN/Home.aspx












ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ,ເມືອງສີສັດຕະນາກ,ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ. ນ. 2392
ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la,ເວັບໄຊທ໌:www.edlgen.com.la